ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫາຍ ປະທານຄະນະກວດກາສູນກາງພັກ ຕີລາຄາສູງຕໍ່ການນໍາພາຂອງຄະນະພັກ ທຫລ ໃນການຮັກສາ ສະຖຽນລະພາບເງິນຕາແຫ່ງຊາດ.



ກອງປະຊຸມເປີດກ້ວາງ ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ 6 ສະໄໝທີ III ໄດ້ຮັບຜົນສໍາເລັດອັນຈົບງາມ ເຊິ່ງດໍາເນີນມາເປັນເວລາ 3 ວັນ ແລະ ໄດ້ປິດລົງຢ່າງເປັນທາງການໃນຕອນແລງຂອງ ວັນທີ 30 ມີນາ 2018 ທີ່ສະໂມສອນສະຖາບັນການທະນາຄານ ນະຄອນຫຼວງວຽງຈັນພາຍໃຕ້ການເປັນປະທານຂອງ ສະຫາຍ ປອ ສົມພາວ ໄຟສິດ ກໍາມະການສູນກາງພັກ, ເລຂາຄະນະພັກ ທຫລ, ຜູ້ວ່າການ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ປອ ບຸນທອງ ຈິດມະນີ ກໍາມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາລັດຖະບານ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຂັ້ນສູນກາງ, ພ້ອມນີ້ ກໍມີບັນດາສະຫາຍຄະນະປະຈໍາພັກ, ຄະນະພັກ, ຄະນະພັກຮາກຖານ-ຄະນະໜ່ວຍພັກ ແລະ ພະນັກງານຫຼັກແຫຼ່ງທົ່ວອົງຄະນະພັກ ທຫລ ເຂົ້າຮ່ວມ.

 

ສະຫາຍເລຂາຄະນະພັກ ທຫລ ໄດ້ລາຍງານສະພາບການເຄື່ອນໄຫວຊີ້ນໍາ ນໍາພາຮອບດ້ານຂອງຄະນະບໍລິຫານງານພັກ ທຫລ ໃນປີ 2017 ຜ່ານມາໃຫ້ສະຫາຍຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກຮັບຊາບ ໂດຍສະເພາະໃນໜຶ່ງປີຜ່ານມານີ້ພາຍໃຕ້ການຊີ້ນໍາ ນໍາພາຂອງຄະນະພັກ ທຫລ ສາມາດຍາດໄດ້ຜົນສໍາເລັດໃນຫຼາຍດ້ານ ເປັນຕົ້ນຍັງສືບຕໍ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດໄດ້ໃນລະດັບດີສົມຄວນ; ອັດຕາເງິນເຟີ້ຢູ່ໃນລະດັບໜຶ່ງຕົວເລກ ຕໍ່າກ່ວາອັດຕາການຂະຫຍາຍຕົວຂອງເສດຖະກິດ, ປະລິມານເງິນ (M2) ຂະຫຍາຍຕົວໃນລະດັບຕໍ່າກ່ວາແຜນການ, ອັດຕາແລກປ່ຽນມີຄວາມສະຫງົບໂດຍ ພື້ນຖານ, ຄັງສໍາຮອງເງິນຕາຕ່າງປະເທດກຸ້ມການນໍາເຂົ້າຕາມແຜນກໍານົດ; ການຄຸ້ມຄອງທະນາຄານ ແລະ ສະຖາບັນການເງິນ ກໍມີທ່ວງທ່າດີຂຶ້ນ; ສໍາລັບວຽກງານຂໍ້ມູນຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ຮັບຜົນຄືບໜ້າເປັນກ້າວໆ ບັນຫາພົ້ນເດັ່ນກໍແມ່ນຜົນສໍາເລັດຂອງ ສປປ ລາວທີ່ໄດ້ຖືກຖອນອອກຈາກບັນຊີຕິດຕາມ (ບັນຊີສີເທົາເຂັ້ມ) ຂອງອົງການຕ້ານການຟອກເງິນສາກົນມາຢູ່ບັນຊີປົກກະຕິໃນກາງປີ 2017; ວຽກງານຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບກໍມີບາດກ້າວຂະຫຍາຍຕົວດີສົມຄວນ.



ໃນຕະຫຼອດ 3 ມື້ຂອງກອງປະຊຸມ,ບັນດາສະຫາຍຜູ້ແທນຂອງກອງປະຊຸມ ຍັງໄດ້ພ້ອມກັນຄົ້ນຄ້ວາເຊື່ອມຊຶມ ແລະ ກໍາແໜ້ນບັນດາບັນຫາຕ່າງໆໃນຜ່ານມາ ແລະ ຕໍ່ໜ້າ, ໃນນີ້ຍັງມີການປະກອບຄໍາຄິດຄໍາເຫັນໃສ່ບົດສະຫຼູບການເຄື່ອນໄຫວຊີ້ນໍານໍາພາຮອບດ້ານຂອງຄະນະພັກ ທຫລ ດ້ວຍບັນຍາກາດສ້າງສັນທີ່ສ່ອງແສງໃຫ້ເຫັນໝາກຜົນແຫ່ງການເຄື່ອນໄຫວຊີ້ນໍາ ແລະ ນໍາພາຂອງຄະນະບໍລິຫານງານພັກ ທຫລ ໃນໜຶ່ງປີ 2017 ຜ່ານມາ, ພ້ອມທັງຜ່ານທິດທາງ

ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ; ພ້ອມນັ້ນທີ່ປະຊຸມຍັງໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME); ແນວທາງການປັບປຸງຖານະການເງິນຂອງທະນາຄານທຸລະກິດລັດຈຳນວນໜຶ່ງ; ລາຍງານການຄຸ້ມຄອງສະຖາບັນການເງິນ; ຄົ້ນຄ້ວາການປັບປຸງນະໂຍບາຍອັດຕາແລກປ່ຽນ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຮັບຟັງການເຜີຍແຜ່ ເຊື່ອມຊຶມບັນດາ ມະຕິ ຄຳສັ່ງທີ່ສຳຄັນຈຳນວນໜຶ່ງຂອງພັກ ແລະ ລັດ.



ສະຫາຍ ຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກໄດ້ຕີລາຄາສູງຕໍ່ການຊີ້ນຳ-ນຳພາຂອງບັນດາສະຫາຍຄະນະພັກ ທຫລ ໃນປີ 2017 ຜ່ານມາ ໂດຍສະເພາະຍັງສືບຕໍ່ໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໂດຍລວມມີຄວາມໝັ້ນທ່ຽງ; ອັດຕາແລກປ່ຽນມີການເໜັງຕີງບາງໄລຍະ ແຕ່ກໍສາມາດຄວບຄຸມໄດ້ ແລະ ປະຕິບັດຕາມຂອບທີ່ກຳນົດໄວ້, ປະລິມານເງິນ (M2) ຂະຫຍາຍຕົວໃນລະດັບຕົວທີ່ກຳນົດໄວ້, ຊຸກຍູ້ສົ່ງເສີມທະນາຄານທຸລະກິດ ປະກອບສ່ວນສະໜອງສິນເຊື່ອຊຸກຍູ້ ສົ່ງເສີມວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ ຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ; ຄຽງຄູ່ກັນນັ້ນ ສະຫາຍຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກຍັງເນັ້ນໃຫ້ຜູ້ແທນກອງປະຊຸມ ຕ້ອງສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີເດັ່ນເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ແລະ ແກ້ໄຂຈຸດອ່ອນ ຂໍ້ຄົງຄ້າງໃຫ້ດີຂຶ້ນເປັນກ້າວໆ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ